San Diego City Schools

Fact Sheet

ລະດູໃບໄມ້ລົ່ນ 2003

# ຜູ່ຮ່ວມງານໃນໂຄງການສຶກສາ

ຄວາມມຸ້ງໝາຍ: **"**ທີ່ເລືອກເອົາໜ້າທີ່ຮັບຜິດຊອບໃນການສຶກສາຮ່ຳຮຽນຂອງເດັກນັ້ນແມ່ນຄວາມພຍາຍາມຂັ້ນສູງສຸດຂອງມະນຸດ... ເດັກຜູ້ທີ່ໄດ້ຮັບຜົນສຳເຣັດ, ສ່ວນໃດສ່ວນນຶ່ງຈາກຄວາມພຍາຍາມຂອງທ່ານນັ້ນ, ຈະມີຄວາມຈເຣີນກ້າວໜ້າ ເປັນຫລັກຖານພິຍານຈາກຜູ້ທີ່ຫວັງດີ.**"**

## ບົດສລູບ

- ❖ ສເລັ່ຍ ທຸຣະກິດ ແລະ ການຈັດຕັ້ງຊຸມຊົນທີ່ເຂົ້າຮ່ວມເປັນຄູ່ຮ່ວມງານ ປະມານ 1,400 ແຫ່ງ
- ❖ ເປີເຊັນໃຫຍ່ສຸດຂອງຄູ່ຮ່ວມງານນັ້ນ ມີພະນັກງານ 30 ຄົນ ຫລື ນ້ອຍກວ່າ
- ❖ ໃນສົກປີ 2002–2003 ຄູ່ຮ່ວມງານຈາກທຸຣະກິດ/ຊຸມຊົນໄດ້ບໍຣິຈາກແຮງເງິນ, ແຮງງານຄົນ, ແລະ ເຄື່ອງຂອງເຂົ້າໃນການສຶກສາໄລ່ເປັນເງິນປະມານ 4.4 ລ້ານດອລລາ
- ❖ ຜົນປະໂຍດຂອງຄູ່ຮ່ວມງານນັ້ນ ມີການປັບປຸງນ້ຳໃຈຂອງໂຄງການໃຫ້ດີຂຶ້ນ ແລະ ຊຸກຍູ້ໃຫ້ພະນັກງານເຮັດວຽກໄດ້ຜົນດີ.

ຜູ່ຮ່ວມງານໃນໂຄງການສຶກສາ ຂອງໂຮງຮຽນເຂດສຶກສາແຊນດີເອໂກ (SDCS) ນີ້, ໄດ້ເຣີ້ມຕົ້ນເມື່ອປີ 1982, ເປັນຮູບການຕົກລົງປະສານງານກັນລະຫວ່າງໂຮງຮຽນ ແລະ ທຸຣະກິດ; ສິລປະວັທນະທັມ, ວິຊາການ, ການບໍຣິການ ແລະ ການຈັດຕັ້ງທີ່ບໍ່ຫາລາຍໄດ້ກຳໄຣຕ່າງໆ; ສະຖາບັນການຮຽນຊັ້ນສູງ; ອົງການຈັດຕັ້ງຣັຖບານ; ແລະ ກອງບັນຊາການທະຫານ. ການຕົກລົງເພື່ອປະສານຊ່ວຍເຫລືອຊຶ່ງກັນແລະກັນນີ້ ແມ່ນເພື່ອ ຜົນສຳເຣັດເຈາະຈົງໃສ່ກັບຄວາມຕ້ອງການ. ຄູ່ຮ່ວມງານແຕ່ລະຝ່າຍມີລັກສນະອັນພິເສດຕ່າງກັນ ແລະ ໂຮງຮຽນແລະຄູ່ຮ່ວມງານ ໄດ້ວາງແຜນການຂອງໃຜຂອງມັນ. ຄູ່ຮ່ວມງານນີ້ ອີງໃສ່ຊັພຍາກອນມະນຸດ – ບໍ່ແມ່ນໃຫ້ປັດຈັຍທາງເງິນ. ໂຄງຮ່າງລະບຽບການປົກຄອງ 9610 ມີຢູ່ໃນໂຄງການ ຄູ່ຮ່ວມງານ ຂອງສູນກາງສຶກສາ.

ໂຄງການນີ້ໄດ້ສເນີ ໂອກາດໃຫ້ທຸຣະກິດ ແລະ ການຈັດຕັ້ງສັງຄົມໃຫ້:

- ເຮັດໜ້າທີ່ຢ່າງຈິງຈັງໃນວຽກງານການສຶກສາຂອງເດັກພວກເຮົາ
- ຄວາມຮູ້ໃນການເຮັດວຽກກ່ຽວກັບການສຶກສາສະທາຣະນະໃນປັດຈຸບັນ; ແລະ
- ປະກັນການເສຖກິດໃນອະນາຄົດ ໃຫ້ແກ່ນັກຮຽນຂອງພວກເຮົາ, ແກ່ຊຸມຊົນເມືອງແຊນດີເອໂກ, ແລະ ທົ່ວປະເທດ.

ບັນຊີລາຍຊື່ກິຈກັມທີ່ແນະນຳຈາກຄູ່ຮ່ວມງານ, ໄດ້ຈັດຊື້ນຈາກການແນະນຳຂອງໂຮງຮຽນ/ຄູ່ຮ່ວມງານ ຊຶ່ງພົວພັນກັບ ຂັ້ນມາຕຖານ, ກໍ່ໄດ້ມີໄວ້ໃຫ້. ໃນບັນຊີຍັງມີເຄື່ອງໃຊ້ຕ່າງໆ ເພື່ອຊ່ວຍໂຮງຮຽນ ແລະ ຄູ່ຮ່ວມງານເນັ້ນໜັກຄວາມພຍາຍາມໃສ່ໃນວິຊາອັກສອນສາດ, ຄະນິດສາດ, ກາຍະສຶກສາ, ວິທຍາສາດ, ສັງຄົມສຶກສາ ແລະ ສິລປະການສະແດງ ແລະ ສິລປະຕົກແຕ່ງ. ລາຍງານປະຈຳປີຂອງຄູ່ຮ່ວມງານ, ຊອງຊອກເອົາຄູ່ຮ່ວມງານ, ວີດີໂອຂ່າວ ແລະ ເຄື່ອງໃຊ້ຊ່ວຍກ່ຽວກັບເຣື່ອງນີ້ ກໍມີໄວ້ໃຫ້ ທີ່ຫ້ອງການສັມພັນຊຸມຊົນ.

ມີກິຈກັມຫຍັງແດ່ທີ່ຄູ່ຮ່ວມງານຊ່ວຍເຫລືອ?

- ສິດສອນບຳຣຸງພວກນັກຮຽນດ້ານວິຊາອ່ານ, ວິຊາຂຽນ ແລະ ວິຊາເລກ
- ບອກສອນພວກນັກຮຽນ ແລະ ແນະຈຸດໃສ່ບັນຫາເຣື່ອງຄ່ານິຍົມຂອງຕົນເອງ
- ຊຸກຍູ້ຄວາມພຍາຍາມ ຈາກໂຮງຮຽນ–ເຂົ້າສູ່ວິຊາຊີບ, ຮວມທັງໄປຢ້ຽມຢາມຫ້ອງການທຸຣະກິດ, ນັກຮຽນໄປຮຽນເຮັດວຽກ, ໄປເບິ່ງການສະແດງວິຊາຊີບ ແລະ ເຊີນແຂກມາບັນລະຍາຍ
- ອາສາສມັກເປັນຄນະກວດກາແຟ້ມຜົນງານ/ການສະແດງບົດຮຽນປີສຸດທ້າຍ
- ຊ່ວຍເຫລືອໂຮງຮຽນ ກ່ຽວກັບແຜນເທັກໂນໂລຊີ
- ໃຫ້ການປຶກສາແນະນຳໂຮງຮຽນດ້ານແຜ່ຂ່າວ, ເຊັ່ນວ່າຈັດໃຫ້ມີຈົດໝາຍເຫດ, ປຶ້ມຂ່າວ ແລະ ປ່ອຍຂ່າວໃຫ້ນັກຂ່າວ
- ນຳໃຊ້ຄນະທີ່ປຶກສາທຸຣະກິດ/ຄູ່ຮ່ວມງານ ແລະ ການຊ່ວຍເຫລືອຂອງຊຸມຊົນ ຮວມກັນເຂົ້າເປັນການສິດສອນໃນຫ້ອງຮຽນ
- ວາງແຜນໃຫ້ມີໂອກາດເຮັດວຽກງານ ແລະ ຮຽນໄປພ້ອມ ສຳຫລັບພວກພະນັກງານ ແລະ/ຫລື ພວກນັກຮຽນ
- ຮ່ວມກັນກັບໂຄງການຕ່າງໆເພື່ອເຮັດໃຫ້ເຂດໂຮງຮຽນສົດສວຍງົດງາມ
- ໃຫ້ການອະທິບາຍແກ່ພວກນັກຮຽນກ່ຽວເຣື່ອງຂັ້ນມາຕຖານຮວມ ໃນວິຊາອ່ານ, ວິຊາຂຽນ, ວິຊາເລກ, ວິທຍາສາດ ແລະ ວິຊາຄອມພິວເຕີ.

*ອະພິບັບທະບາການຈາກມູນນິທິ Annie E. Casey Foundation*


ເພື່ອລາຍລະອຽດຕິດຕໍ່ຫາ: **Community Relations Department: (619) 725-5597**

**Media inwuires: (619) 725-5578** **www.sandi.net**


"ບໍຣິການຊ່ວຍເຫລືອນັກຮຽນຫລາຍກວ່າ 138,000 ຄົນ, ສູນກາງສຶກສາແຊນດີເອໂກເປັນສູນກາງໃຫຍ່ທີ່ສຸດທີສອງໃນຣັຖຄາລີຟໂນເນັຍ, ມີໂຮງຮຽນຫລາຍກວ່າ 200 ແຫ່ງ ແລະ ມີພະນັກງານຫລາຍກວ່າ 14,500 ຄົນ ທີ່ທຽບເທົ່າຕຳແຫນ່ງເຕັມເວລາ (ຊຶ່ງເປັນຕົວແທນໃຫ້ຈຳນວນພະນັກງານຫລາຍກວ່າ 18,800 ຄົນ.) ສູນກາງສຶກສາແຊນດີເອໂກໄດ້ປັບປຸງຄວາມສຳເຣັດຂອງນັກຮຽນໂດຍຜ່ານການເນັ້ນໜັກໃສ່ພື້ນຖານການສຶກສາດ້ານວິຊາອ່ານ, ວິຊາຂຽນ, ແລະ ວິຊາເລກສູນກາງສຶກສາໄດ້ຕັດສິນໃຈຊ່ວຍເຫລືອໂຮງຮຽນ ແລະ ສົ່ງເສີມໃຫ້ສະພາບແວດລ້ອມການຮຽນໂດຍປັບປຸງຕຶກອາຄານຂອງໂຮງຮຽນ ແລະ ວັດຖຸການຮຽນໃຫ້ທັນສໄມ ແລະ ດຳເນີນງານຜ່ານການພົວພັນພໍ່ແມ່, ຄຣູອາຈານ, ແລະ ຊຸມຊົນ."

---

ພາລະໜ້າທີ່ຂອງໂຮງຮຽນສູນກາງສຶກສາແຊນດີເອໂກແມ່ນເພື່ອປັບປຸງຄວາມສຳເຣັດຂອງພວກນັກຮຽນ
ໂດຍຊຸກຍູ້ຊ່ວຍເຫລືອການສິດສອນ ແລະ ການຮ່ຳຮຽນຢູ່ໃນຫ້ອງຮຽນ.